

**ຊື່ຜູ້ສະໝັກຮັບເລືອກຕັ້ງ:** Julie Kang
**ຊື່ແຄມເປນ:** Julie for Seattle D5
**ເວັບໄຊແຄມເປນ:** [https://julieforseattle.com/](https://julieforseattle.com/)
**ຕຳແໜ່ງ:** ສະມາຊິກສະພາເທດສະບານເມືອງ ເຂດ 5
**ເບີໂທລະສັບແຄມເປນ:** 206.880.3873
**ຄຳແນະນຳຕົວຜູ້ສະໝັກ (ບໍ່ເກີນ 200 ຄຳ):**

ຂ້າພະເຈົ້າເປັນຜູ້ຢູ່ອາໄສໃນເຂດ 5 ມາດົນແລ້ວ, ເປັນນັກວິຊາການສຶກສາ ແລະ ເປັນສະມາຊິກທີ່ແຂງຂັນໃນຊຸມຊົນ. ໃນຖານະຜູ້ອົບພະຍົບທີ່ສ້າງຊີວິດຂອງຕົນເອງຢູ່ທາງຕອນເໜືອຂອງເມືອຊີແອຕເທິລ ຂ້າພະເຈົ້າເຂົ້າໃຈດີວ່າການຕັດສິນໃຈຂອງເມືອງມີຜົນຕໍ່ສິ່ງທີ່ເກີດຂຶ້ນຈິງໃນຊີວິດປະຈຳວັນຂອງຄອບຄົວຄົນເຮັດວຽກ, ຜູ້ອົບພະຍົບ ແລະ ທຸລະກິດຂະໜາດນ້ອຍແນວໃດ.

ພວກເຮົາຕ້ອງການໃຫ້ຜູ້ນຳຂອງພວກເຮົາຮັບຟັງ ແລະເຂົ້າໃຈວ່າເຂດຂອງພວກເຮົາຕ້ອງການຫຍັງຢ່າງແທ້ຈິງ. ສິ່ງທີ່ຂ້າພະເຈົ້າໃຫ້ຄວາມສຳຄັນເປັນລຳດັບຕົ້ນໆແມ່ນຄວາມສາມາດໃນການຈ່າຍຄ່າຄອງຊີບ, ທີ່ຢູ່ອາໄສ, ຄວາມປອດໄພ ແລະ ການແກ້ໄຂບັນຫາການບໍ່ມີທີ່ຢູ່ອາໄສ ພ້ອມທັງການຄຸ້ມຄອງຜູ້ອົບພະຍົບ.

ຂ້າພະເຈົ້າເຄີຍໃຊ້ຊີວິດການເຮັດວຽກຂອງຂ້າພະເຈົ້າໃນດ້ານການສຶກພາກລັດ ແລະ ການສຶກສາຂັ້ນອຸດົມສຶກສາ ໂດຍຝຶກອົບຮົມຄູອາຈານເພື່ອສະໜັບສະໜູນຜູ້ຮຽນທີ່ໃຊ້ຫຼາຍພາສາ. ຂ້າພະເຈົ້າເຄີຍເຮັດວຽກຢູ່ University of Washington ແລະ Seattle University ໂດຍເປັນຜູ້ນຳ ແລະອອກແບບໂຄງການຂະໜາດໃຫຍ່, ບໍລິຫານງົບປະມານສາທາລະນະທີ່ຊັບຊ້ອນ ແລະ ສ້າງຄວາມຮ່ວມມືຂ້າມຂະແໜງການທີ່ສຸມໃສ່ຄວາມຮັບຜິດຊອບ, ຄວາມສະເໝີພາບ ແລະ ຜົນຮັບ.

ຂ້າພະເຈົ້າເຄີຍເປັນກຳມະການສະໂມສອນຊຸມຊົນ Haller Lake, ເປັນອາສາສະໝັກຢູ່ທະນາຄານອາຫານ, ໃຫ້ຄວາມຮູ້ແກ່ຊຸມຊົນຜູ້ອົບພະຍົບຂອງພວກເຮົາ ແລະ ແຈກຢາຍຊຸດອຸປະກອນໝາກຫວິດສຸກເສີນ ແລະ ນຳພາການຍ່າງ FuseD5 ເພື່ອສະໜັບສະໜູນທຸລະກິດຂະໜາດນ້ອຍ.

ຂ້າພະເຈົ້າເປັນສະມາຊິກສະຫະພາບແຮງງານ WEA ທີ່ພາກພູມໃຈ
ແລະສາມີຂອງຂ້າພະເຈົ້າເປັນສະມາຊິກຂອງ UFCW 3000.

ຂ້າພະເຈົ້າຈະນໍາເອົາຄວາມຮູ້ກ່ຽວກັບຊຸມຊົນ, ປະສົບການດ້ານການທະນາຄານ, ຄວາມຊ່ຽວຊານດ້ານນະໂຍບາຍ ແລະຄວາມເປັນຜູ້ນໍາທີ່ໝັ້ນຄົງມາສູ່ສະພາເມືອງຂອງພວກເຮົາ. ຂ້າພະເຈົ້າຂໍສັນຍາວ່າຈະເປັນຜູ້ນໍາທີ່ຊຸມຊົນຂອງພວກເຮົາຕ້ອງການ ເປັນຜູ້ນໍາທີ່ຮັບຟັງ ແລະ ໃຫ້ການສະໜັບສະໜູນຜູ້ທີ່ບໍ່ມີປາກມີສຽງ.

ຂ້າພະເຈົ້າຮູ້ສຶກເປັນກຽດຢ່າງຍິ່ງທີ່ຈະໄດ້ຮັບການສະໜັບສະໜູນຈາກທ່ານ ແລະເປັນຕົວແທນຂອງເຂດຂອງພວກເຮົາ.

*ຜູ້ສະໝັກຮັບເລືອກຕັ້ງຄົນນີ້ກໍາລັງເຂົ້າຮ່ວມໃນໂຄງການບັດກໍານັບສະໜັບສະໜູນປະຊາທິປະໄຕ.*



**ຊື່ຜູ້ສະໝັກລົງໂຄສະນາຫາສຽງ:** **Silas James**

**ຊື່ນະໂຍບາຍໃນການຫາສຽງ:** **ນະໂຍບາຍຂອງ Silas ສຳລັບເມືອງ Seatle**

**ເວັບໄຊກ່ຽວກັບນະໂຍບາຍຫາສຽງ:** [https://silasforseattle.com/](https://silasforseattle.com/)

**ເຂດເລືອກຕັ້ງ:** **ສະພາເມືອງເຂດ 5**

**ເບີໂທລະສັບສຳລັບລາຍລະອຽດກ່ຽວກັບນະໂຍບາຍການຫາສຽງ:** **(425) 224-5463**

ຂ້າພະເຈົ້າ ຊື່ Silas James, ຂ້າພະເຈົ້າ ລົງສະໝັກເປັນ ສສ ສະພາເມືອງ Seatle ເຂດ 5 ເພື່ອເຮັດໃຫ້ເມືອງຂອງພວກເຮົາດີຂຶ້ນ ສຳລັບທຸກຄົນ. ໃນຖານະທີ່ຂ້າພະເຈົ້າແມ່ນຜູ້ພິການຄົນໜຶ່ງທີ່ເຮັດໜ້າທີ່ໃນການຖ່າຍທອດຄວາມຮູ້, ທັງເປັນນັກຄົ້ນຄວ້າ ແລະ ນັກໂຄສະນາເຜີຍແຜ່ ແລະ ທັງເປັນປະທານຄະນະກຳມະການຄົນພິການຂອງເມືອງ Seatle, ຂ້າພະເຈົ້າ ຮູ້ສຶກກັງວົນຫຼາຍຕໍ່ລະບົບການບໍລິຫານເມືອງທີ່ຜິດພາດຂອງພວກເຮົາ. ຂ້າພະເຈົ້າ ໃຫ້ຄຳໝັ້ນວ່າ ຈະຮັບປະກັນໃຫ້ບັນດາຫົວໜ່ວຍທຸລະກິດທີ່ຮັ່ງມີຕ່າງໆ ຈ່າຍສ່ວນແບ່ງທີ່ຍຸຕິທຳຂຶ້ນ, ຂະຫຍາຍຕາໜ່າງບ່ອນຢູ່ອາໄສທີ່ມີລາຄາບໍ່ແພງ, ແລະ ສ້າງວິທີແກ້ໄຂທີ່ອີງໃສ່ຊຸມຊົນເປັນຫຼັກເພື່ອຄວາມປອດໄພຊຸມຊົນ ແລະ ຄວາມຍຸຕິທຳດ້ານສະພາບອາກາດ. ຖ້າພວກເຮົາເຮັດໃຫ້ເມືອງ Seatle ກາຍເປັນເມືອງທີ່ສາມາດຕອບສະໜອງຄວາມມຸ້ງໝາດປາດຖະໜາສູງສຸດຂອງທຸກຄົນໄດ້, ທຸກຄົນແມ່ນຈະໄດ້ຮັບຜົນປະໂຫຍດນຳກັນໝົດ.

ໃນຕະຫຼອດຊີວິດຂອງຂ້າພະເຈົ້າ ແມ່ນເຝົ້າຄອຍຄິດຕາມສັງເກດສິ່ງທີ່ສ້າງຜົນປະໂຫຍດອັນລວມໃຫ້ແກ່ສັງຄົມມາໂດຍຕະຫຼອດ, ອັນເຮັດໃຫ້ຂ້າພະເຈົ້າ ກາຍມາເປັນຜູ້ທີ່ມີຄວາມຊຳນານໃນລະບົບທີ່ສັບຊ້ອນນີ້. ຂ້າພະເຈົ້າ ໃຫ້ຄຳຊີ້ແນະແບບຕົວຕໍ່ຕົວ ແລະ ສິດສອນເປັນກຸ່ມ ເພື່ອໃຫ້ພວກເຂົາເຫຼົ່ານັ້ນຮູ້ວິທີປະສົບຜົນສຳເລັດ, ແຕ່

ມາບັດນີ້ ມັນຮອດເວລາແລ້ວ ທີ່ຈະຕ້ອງໄດ້ປັບປຸງລະບົບດັ່ງກ່າວ ເພື່ອໃຫ້ທຸກຄົນພົນລະເມືອງຂອງ Seatle ໄດ້ຮັບຜົນປະໂຫຍດນຳກັນໝົດ.

ຂ້າພະເຈົ້າ ລົງສະໝັກໃນເທື່ອນີ້ ເພື່ອມອບເຄື່ອງມືໃຫ້ແກ່ພີ່ນ້ອງປະຊາຊົນ ທີ່ພວກເຂົາຈະສາມາດນຳເອົາໄປໃຊ້ເພື່ອກ້າວໜ້າໃນຊີວິດ ແລະ ເພື່ອສ້າງແວດລ້ອມຊຸມຊົນທີ່ປອດໄພ ສຳລັບທຸກຄົນ ບໍ່ວ່າ ພວກເຂົາຈະແມ່ນໃຜ, ມາຈາກໃສ ແລະ ມີຖານະລ້ຳລວຍສ່ຳໃດ.

ຂ້າພະເຈົ້າ ຮຽກຮ້ອງໃຫ້ບັນດາທ່ານ ສະໜັບສະໜູນການລົງໂຄສະນາຫາສຽງຂອງຂ້າພະເຈົ້າ ໂດຍການເລືອກເອົາ ແລະ ມອບບັດປະຊາທິປະໄຕຂອງທ່ານໃຫ້ແກ່ Silas ສຳລັບເມືອງ Seattle. ເພື່ອຮັບປະກັນອະນາຄົດໃນຄວາມເປັນເຈົ້າຂອງເມືອງຂອງພວກເຮົາ, ບໍ່ແມ່ນສຳລັບບັນດາເສດຖີນັກທຸລະກິດພັນລ້ານເຫຼົ່ານັ້ນ.

*ຜູ້ສະໝັກຮັບເລືອກຕັ້ງຄົນນີ້ກຳລັງເຂົ້າຮ່ວມໃນໂຄງການບັດຮັບສິດປະຊາທິປະໄຕ.*



ຊື່ຜູ້ສະໝັກຮັບເລືອກຕັ້ງ: Nilu Jenks

ຊື່ແຄມເປນ: Neighbors for Nilu

ເວັບໄຊແຄມເປນ: https://www.neighborsfornilu.org

ຕຳແໜ່ງ: ສະມາຊິກສະພາເທດສະບານເມືອງ ເຂດ 5

ເບີໂທລະສັບແຄມເປນ: 206-321-9890

ພື້ນທີ່ທາງຕອນເໜືອຂອງເມືອງຊີແອຕເທິລແມ່ນບ່ອນທີ່ລູກໆຂອງຂ້າພະເຈົ້າເຕີບໃຫຍ່ຂຶ້ນມາ, ເຊິ່ງເປັນບ່ອນທີ່ເພື່ອນບ້ານໄດ້ກາຍເປັນເພື່ອນຕະຫຼອດຊີວິດ ແລະ ເປັນບ່ອນທີ່ຂ້າພະເຈົ້າໄດ້ໃຊ້ເວລາຫຼາຍປີເຮັດວຽກເພື່ອສ້າງຄວາມເຂັ້ມແຂງໃຫ້ຊຸມຊົນຂອງພວກເຮົາ. ຕັ້ງແຕ່ການພົບປະສົນທະນາຢູ່ສວນສາທາລະນະສຳລັບໝາໄປຈົນເຖິງການປະຊຸມຂອງຊຸມຊົນ, ຂ້າພະເຈົ້າມັກພົບປະພົວພັນກັບເພື່ອນບ້ານ ແລະ ສ້າງຊຸມຊົນໃນແບບທີ່ຜູ້ຄົນເບິ່ງແຍງເຊິ່ງກັນແລະກັນ. ຂ້າພະເຈົ້າລົງສະໝັກຮັບເລືອກຕັ້ງເພື່ອຮັບໃຊ້ເຂດ 5 ເພາະວ່າຂ້າພະເຈົ້າຮັກພື້ນທີ່ແຫ່ງນີ້.

ຂ້າພະເຈົ້າເປັນລູກສາວຂອງຄົນອົບພະຍົບຊາວອີຣ່ານ, ເປັນຜູ້ສະໜັບສະໜູນຊຸມຊົນ ແລະ ເປັນແມ່ທີ່ເຮັດວຽກທີ່ມີລູກສອງຄົນ. ຂ້າພະເຈົ້າໄດ້ໃຊ້ເວລາຫຼາຍປີເຮັດວຽກຮ່ວມກັບເພື່ອນບ້ານເພື່ອປັບປຸງໂຮງຮຽນຂອງພວກເຮົາ, ສ້າງຄວາມເຂັ້ມແຂງໃຫ້ການເປັນເພື່ອນບ້ານຂອງພວກເຮົາ ແລະ ສ້າງຊຸມຊົນທີ່ມີຄວາມເປັນເອກະພາບຫຼາຍຂຶ້ນ.

ໃນສະພາເທດສະບານເມືອງ, ຂ້າພະເຈົ້າຈະຕໍ່ສູ້ເພື່ອໃຫ້ມີທີ່ຢູ່ອາໄສໃນລາຄາພໍຈ່າຍໄດ້ທີ່ຢູ່ໃກ້ກັບໂຮງຮຽນ, ສວນສາທາລະນະ ແລະ ການຂົນສົ່ງສາທາລະນະ. ຂ້າພະເຈົ້າຈະແກ້ໄຂບັນຫາຊ່ອງຫວ່າງໃນການເຂົ້າເຖິງອາຫານທີ່ເກີດຈາກການປິດຮ້ານຂາຍເຄື່ອງແຫ້ງ ແລະ ຮ້ານຂາຍຢາໃນໄລຍະບໍ່ດົນມານີ້, ເຊິ່ງເຮັດໃຫ້ຊີວິດປະຈຳວັນຂອງຄອບຄົວ ແລະ ຜູ້ສູງອາຍຸມີຄວາມຫຍຸ້ງຍາກຫຼາຍຂຶ້ນ. ຂ້າພະເຈົ້າມີຄວາມມຸ່ງໝັ້ນດ້ານຄວາມຍຸຕິທຳເລື່ອງດິນຟ້າອາກາດ ແລະ ຖະໜົນຫົນທາງທີ່ປອດໄພຫຼາຍຂຶ້ນ, ການສ້າງຄວາມສະຫງົບໃນການສັນຈອນ ແລະ ເຮັດໃຫ້ມີທາງ ຍ່າງທີ່ຊຸມຊົນຂອງພວກເຮົາໄດ້ຮັບຄຳໝັ້ນສັນຍາມາເປັນເວລາຫຼາຍທົດສະວັດແລ້ວ.

ໃນວຽກງານຂອງຂ້າພະເຈົ້າຢູ່ທີ່ FairVote Washington ຂ້າພະເຈົ້າໄດ້ຊ່ວຍນໍາເອົາຜູ້ຄົນມາຮ່ວມກັນໃນທ້ອງຖິ່ນເພື່ອເສີມຂະຫຍາຍ ແລະ ປົກປ້ອງປະຊາທິປະໄຕຂອງພວກເຮົາ.

ແຄມເປນຫາສຽງນີ້ແມ່ນໄດ້ຮັບການສະໜັບສະໜູນຈາກເພື່ອນບ້ານທີ່ເຊື່ອວ່າເຂດ 5 ສົມຄວນທີ່ຈະມີຜູ້ນໍາທີ່ມາປະກົດຕົວໃຫ້ເຫັນ, ຮັບຟັງສຽງປະຊາຊົນ ແລະ ໃຫ້ການບໍລິການ. ນັ້ນແມ່ນສິ່ງທີ່ຂ້າພະເຈົ້າຕັ້ງໃຈຈະເຮັດ.

*ຜູ້ສະໝັກຮັບເລືອກຕັ້ງຄົນນີ້ກໍາລັງເຂົ້າຮ່ວມໃນໂຄງການບັດເລືອກຕັ້ງສະໜັບສະໜູນປະຊາທິປະໄຕ.*



**ຊື່ຜູ້ສະໝັກຮັບເລືອກຕັ້ງ:** Dimitri Georgakopoulos

**ຊື່ແຄມເປນ:** Passionate Advocacy for a better Seattle

**ຕໍາແໜ່ງ:**

ສະມາຊິກສະພາເທດສະບານເມືອງ

ເຂດ 5

**ເບີໂທລະສັບແຄມເປນ:**
206.409.7275

**ຄໍາແນະນໍາຕົວຜູ້ສະໝັກ (ບໍ່ເກີນ 200 ຄໍາ):**

ຂ້າພະເຈົ້າເປັນຊາວເມືອງຊີແອດເທິລ ແລະຂ້າພະເຈົ້າພ້ອມແລ້ວທີ່ຈະເປັນຜູ້ສະໜັບສະໜູນທີ່ໜັກແໜ້ນທີ່ສຸດເພື່ອເມືອງນີ້.

ຂ້າພະເຈົ້າເຕີບໃຫຍ່ຢູ່ເມືອງມອນເລກ, ໄດ້ຮັບການສຶກສາຢູ່ໂຮງຮຽນມັດທະຍົມປາຍ Garfield, ໄດ້ຮັບການຫຼໍ່ຫຼອມທາງການສຶກສາ ແລະ ຄວາມຄິດຈາກມະຫາວິທະຍາໄລ Seattle University. ຕະຫຼອດໄລຍະເວລາເກືອບສາມທົດສະວັດທີ່ຂ້າພະເຈົ້າເປັນຜູ້ປະກອບການຢູ່ທີ່ນີ້ ໂດຍເລີ່ມຈາກການເປັນເຈົ້າຂອງຮ້ານອາຫານກຣີກ, ຈາກນັ້ນສ້າງອາຊີບດ້ວຍການເປັນນາຍໜ້າຊື້ຂາຍອະສັງຫາລິມະສັບທີ່ໄດ້ຮັບໃບອະນຸຍາດ. ຂ້າພະເຈົ້າໄດ້ເຝົ້າເບິ່ງຄໍາສັນຍາຂອງທີ່ໃຫ້ໄວ້ແກ່ຊາວເມືອງຊີແອດເທິລ ທີ່ຕ້ອງປະເຊີນກັບສິ່ງທ້າທາຍທີ່ຫຍຸ້ງຍາກ ແຕ່ກັບໃຫ້ຜົນຮັບທີ່ບໍ່ໜ້າປະທັບໃຈ.

ນັກການເມືອງໃຫ້ຄໍາໝັ້ນສັນຍາເລື່ອງລາຄາທີ່ສາມາດຈັບຕ້ອງໄດ້. ເມືອງຊີແອດເທິລຍັງຄົງເປັນເມືອງທີ່ມີຄ່າຄອງຊີບສູງ. ເຂົາເຈົ້າສັນຍາວ່າຈະມີຄວາມປອດໄພ. ລະແວກຖະໜົນອາໂຣຣາ ຍັງຄົງມີການຄ້າມະນຸດທາງເພດຢ່າງແຜ່ຫຼາຍ ແລະ ທຸລະກິດທີ່ຫາກິນໂດຍການເອົາປຽບຜູ້ອື່ນ. ນັກການເມືອງສ້າງເສັ້ນທາງລົດຖີບ ໃນຂະນະທີ່ແລວທາງການຄ້າກາຍເປັນຊົບເຊົາ, ຜູ້ປະກອບການຂາດການສະໜັບສະໜູນ ແລະ ທີ່ຢູ່ອາໄສສໍາລັບຜູ້ມີລາຍໄດ້ຕໍ່າກໍ່ກະຈຸກຕົວຕົວຢູ່ໃນເຂດ 5 ໂດຍບໍ່ມີຄວາມສະເໝີພາບ ຫຼື ວິໄສທັດ.

ແລະໃນຂະນະທີ່ບັນດາຜູ້ນໍາກໍາລັງສົນໃຈເລື່ອງອື່ນ ໄພຄຸກຄາມແບບງຽບໆກໍາລັງເພີ່ມຂຶ້ນ ນັ້ນກໍຄື  ປັນຍາປະດິດ (AI) ທີ່ກໍາລັງເຂົ້າມາແທນທີ່ຕໍາແໜ່ງວຽກງານ ແລະ ປ່ຽນແປງອະນາຄົດຂອງການເຕີບໂຕຂອງເມືອງຕ່າງໆ.

ເຂດ 5 ເປັນເຂດທີ່ພິເສດຢ່າງຍິ່ງ ເນື່ອງຈາກເປັນພື້ນທີ່ທີ່ມີວັດທະນະທໍາຫຼາກຫຼາຍ, ມີພູມິທັດທີ່ສວຍງາມ ແລະ ທ່າແຮງອັນໃຫຍ່ຫຼວງທີ່ຍັງບໍ່ມີການນໍາໄປໃຊ້ປະໂຫຍດ. ພື້ນທີ່ນີ້ສົມຄວນທີ່ຈະມີຜູ້ນໍາທີ່ມອງເຫັນທ່າແຮງດັ່ງກ່າວ ພ້ອມທັງຕໍ່ສູ້ ແລະ ລົງມືປະຕິບັດໃຫ້ເປັນຜົນສໍາເລັດ.

ຂ້າພະເຈົ້າບໍ່ແມ່ນນັກການເມືອງອາຊີບ. ຂ້າພະເຈົ້າເປັນເພື່ອນບ້ານ,

ເປັນຜູ້ສະໜັບສະໜຸນທ່ານ ແລະ ເປັນຜູ້ມອງໂລກຕາມຄວາມເປັນຈິງ. ເຂດ 5

ຈຳເປັນຕ້ອງມີທາງອອກໃນການແກ້ໄຂບັນຫາທີ່ແທ້ຈິງ.

ຂ້າພະເຈົ້າພ້ອມທີ່ຈະສົ່ງມອບທາງອອກເຫຼົ່ານີ້ແລ້ວ.

*ຜູ້ສະໝັກຮັບເລືອກຕັ້ງຄົນນີ້ກຳລັງເຂົ້າຮ່ວມໃນໂຄງການບັດເລືອກຕັ້ງສະໜັບສະໜູນປະຊາທິປະໄຕ.*